# ໃໝ່! ສາມາດສະໝັກເງິນທຶນສະໜັບສະໜູນການເດີນທາງໄດ້ຕະຫຼອດປີ!!!

Arts Networks Asia (ANA) ຂໍເຊີນຊວນບັນດາທ່ານເຂົ້າຮ່ວມສະໝັກເອົາເງິນທຶນສະໜັບສະໜູນໃນການເດີນທາງເພື່ອການຮ່ວມມື, ຄົ້ນຄວ້າວິໄຈ, ສ້າງເຄືອຂ່າຍ, ສົນທະນາ ຂ້າມພົມແດນທັງຢູ່ຊຸມຊົນພາຍໃນ ແລະ ລະດັບພາກພື້ນ. ເງິນທຶນສະໜັບສະໜູນດັ່ງກ່າວແມ່ນໃຫ້ສະເພາະແຕ່ບັນດາສິລະປິນໃນອາຊີ ແລະ ກຸ່ມຄົນເຮັດວຽກທາງດ້ານສິລະປະໃນພາກພື້ນອາຊີ ເຊິ່ງຈະເດີນທາງທ່ອງທ່ຽວພາຍໃນທະວີບອາຊີເທົ່ານັ້ນ. ເງິນທຶນສະໜັບສະໜູນມີມູນຄ່າສູງສຸດພຽງແຕ່ 1,000 USD.
ຜູ້ທີ່ສົນໃຈເຂົ້າສະໝັກຈະຕ້ອງກະກຽມສົ່ງເອກະສານອັນໄດ້ແກ່ ໃບສະເໜີ, ຊີວະປະຫວັດຫຍໍ້ (CVs) ແລະ ງົບປະມານການໃຊ້ຈ່າຍຢ່າງລາຍລະອຽດມາພ້ອມ, ເຊິ່ງໃບສະໝັກຈະຕ້ອງຖືກຍື່ນບໍ່ໃຫ້ເກີນໜຶ່ງເດືອນກ່ອນມື້ອອກເດີນທາງ (ສຳລັບໃບສະໝັກທີ່ບໍ່ແມ່ນພາສາອັງກິດແມ່ນຈະຕ້ອງຍື່ນກ່ອນສອງເດືອນເພື່ອໃຊ້ເວລາໃນການແປ).

ກະລຸນາສົ່ງໃບສະໝັກຂອງທ່ານຜ່ານທີ່ຢູ່ທາງ email ທີ່ mervyn@theatreworks.org.sg ແລະ taytong@theatreworks.org.sg ຖ້າຫາກວ່າໃບສະໝັກຂອງທ່ານໄດ້ຮັບການອະນຸມັດ, ຜູ້ສະໝັກຈະຕ້ອງໄດ້ສົ່ງບົດລາຍງານກ່ຽວກັບໂຄງການ ເຊິ່ງປະກອບມີ ໜັງສືຂໍ້ຄວາມ, ຮູບພາບ ຫຼື ວີດີໂອ ພາຍໃນກຳນົດໜຶ່ງເດືອນຫຼັງຈາກການເດີນທາງ. ຖ້າບໍ່ດັ່ງນັ້ນ, ຜູ້ສະໝັກອາດຈະຕ້ອງໄດ້ຊົດໃຊ້ເງິນຄືນໃຫ້ Arts Network Asia ຕາມເຫັນຄວນ.